ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ ຫ້ອງການ ທຫລ
ໂທ/ແຟກ (856-21) 213109, 213110

# ເປີດການຖະແຫຼງຂ່າວ ກ່ຽວກັບຄຳແນະນຳ ຄຳສັ່ງເລກທີ 10/ນຍ ວ່າດ້ວຍການຈັດຕັ້ງປະຕິບັດການຄຸ້ມຄອງເງິນຕາຕ່າງປະເທດ




ໃນຕອນບ່າຍວັນທີ 07 ກັນຍາ 2023 ທີ່ຫ້ອງປະຊຸມຊັ້ນ 6 ທຫລ **ໄດ້ເປີດການຖະແຫຼງຂ່າວ ກ່ຽວກັບຄຳແນະນຳ ຄຳສັ່ງ ເລກທີ 10/ນຍ, ລົງວັນທີ 14 ກໍລະກົດ 2023 ວ່າດ້ວຍການຈັດຕັ້ງປະຕິບັດການຄຸ້ມຄອງເງິນຕາຕ່າງປະເທດ** ຂຶ້ນ. ຕາງໜ້າກົມຄຸ້ມຄອງເງິນຕາຕ່າງປະເທດ ໂດຍ **ທ່ານ ວັດທະນາ ຊານຸບານ ຮອງຫົວໜ້າກົມຄຸ້ມຄອງເງິນຕາຕ່າງປະເທດ ທະນາຄານແຫ່ງ ສປປ ລາວ** ມີຄຳເຫັນຊີ້ແຈງເພີ່ມເຕີມຕໍ່ກັບການຈັດຕັ້ງປະຕິບັດການຄຸ້ມຄອງເງິນຕາຕ່າງປະເທດຢູ່ ສປປ ລາວ ມາຍັງບັນດາພໍ່ແມ່ປະຊາຊົນ, ພໍ່ຄ້າຊາວຂາຍ, ພະນັກງານ, ທະຫານ, ຕຳຫຼວດ ຕະຫຼອດຮອດຜູ້ທີ່ມີພູມລຳເນົາຢູ່ ສປປ ລາວ ໃນຂອບເຂດທົ່ວປະເທດ ຊາບວ່າ: **ການອ່ອນຄ່າຂອງເງິນຕາຕ່າງປະເທດ** ແມ່ນມີປັດໄຈມາຈາກຄວາມບໍ່ດຸ່ນດ່ຽງກັນ ລະຫວ່າງ ຄວາມຕ້ອງການເງິນຕາຕ່າງປະເທດ ແລະ ຄວາມສາມາດໃນການສະໜອງເງິນຕາຕ່າງປະເທດຈາກລະບົບເສດຖະກິດໃນສະພາບທີ່ເສດຖະກິດພວມຢູ່ໃນໄລຍະຟື້ນຟູ ແລະ ການສົ່ງອອກມີທ່າອ່ຽງດີຂຶ້ນ. ທະນາຄານແຫ່ງ ສປປ ລາວ (ທຫລ) ຈຶ່ງໄດ້ຄົ້ນຄວ້າຫຼາຍມາດຕະການ ເພື່ອຍົກສູງປະສິດທິພາບການຄຸ້ມຄອງເງິນຕາຕ່າງປະເທດ ໃຫ້ເຂົ້າສູ່ລະບົບ ແລະ ມີຄວາມເປັນລະບຽບຮຽບຮ້ອຍ, ຮັບປະກັນກະແສເງິນຕາຕ່າງປະເທດ ເຂົ້າສູ່ລະບົບທະນາຄານໃຫ້ຫຼາຍຂຶ້ນ ແລະ ທະນາຄານທຸລະກິດມີຄວາມສາມາດດຸນດ່ຽງເງິນຕາແກ່ສັງຄົມໄດ້ຢ່າງເໝາະສົມ ສ້າງເງື່ອນໄຂສະດວກໃຫ້ແກ່ການດຳເນີນທຸລະກິດ, ການຄ້າ ແລະ ການລົງທຶນພາຍໃນປະເທດ. ທັງນີ້ກໍເພື່ອຮັບປະກັນສະຖຽນລະພາບໃຫ້ແກ່ອັດຕາແລກປ່ຽນ ແລະ ຫຼຸດຜ່ອນການເພີ່ມຂຶ້ນຂອງອັດຕາເງິນເຟີ້.

ໃນໂອກາດນີ້ **ທ່ານ ວັດທະນາ ຊານຸບານ ຮອງຫົວໜ້າກົມຄຸ້ມຄອງເງິນຕາຕ່າງປະເທດ, ທະນາຄານ ແຫ່ງ ສປປ ລາວ** ໄດ້ໃຫ້ຂໍ້ມູນລາຍລະອຽດເພີ່ມຕື່ມຕໍ່ກັບ ຄຳສັ່ງນາຍົກລັດຖະມົນຕີ ເລກທີ 10/ນຍ, ລົງວັນທີ 14 ກໍລະກົດ 2023 ເພື່ອຫລີກລ້ຽງບັນຫາຄວາມຮັບຮູ້ ແລະ ເຂົ້າໃຈຂອງສັງຄົມໄປໃນທິດທາງທີ່ບໍ່ຖືກຕ້ອງ **ໂດຍສະເພາະໃນຂອດການຖືຄອງເງິນຕາຕ່າງປະເທດ ຄື: ລັດຖະບານຍັງເປີດກວ້າງຕໍ່ການຖືຄອງທັງຮູບແບບເງິນຝາກໃນບັນຊີທະນາຄານ ແລະ ຮູບແບບເງິນສົດ. ໝາຍຄວາມວ່າ:  ທະນາຄານແຫ່ງ ສປປ ລາວ (ທຫລ) ບໍ່ໄດ້ມີການກົດຫ້າມການຖືຄອງເງິນຕາໃນຮູບແບບເງິນສົດ ແລະ ປ່ຽນແປງນະໂຍບາຍການຖືຄອງເງິນຕາຕ່າງປະເທດ ຊຶ່ງຍັງຈະສືບຕໍ່ເປີດກວ້າງ ແລະ ອະນຸຍາດໃຫ້ຖືຄອງເງິນຕາຕ່າງປະເທດຄືໄລຍະຜ່ານມາ ແຕ່ ທຫລ ຈະຊຸກຍູ້ໃຫ້ຜູ້ທີ່ມີແຫຼ່ງລາຍຮັບເງິນຕາຕ່າງປະເທດ ນຳມາຝາກໄວ້ໃນລະບົບທະນາຄານ ເພື່ອຄວາມປອດໄພ, ໝັ້ນຄົງ ແລະ ກໍ່ປະໂຫຍດສູງສຸດ** (ຊຶ່ງໃນຍຸກແຫ່ງການພັດທະນາເຕັກໂນໂລຊີທາງການເງິນໃນປະຈຸບັນ (FinTech) ການຖືຄອງເງິນສົດໄວ້ຫຼາຍແມ່ນບໍ່ສະດວກສະບາຍ ແລະ ບໍ່ຮັບປະກັນຄວາມປອດໄພ ແລະ ຍາກໃນການຄຸ້ມຄອງ ຊຶ່ງບັນດາປະເທດຕ່າງໆ ແມ່ນໄດ້ຫັນເປັນສັງຄົມໃຊ້ເງິນສົດໜ້ອຍລົງ (Cashless Society) ຫັນເຂົ້າສູ່ລະບົບທະນາຄານ ແລະ ນຳໃຊ້ຮູບການບໍລິການຂອງທະນາຄານເປັນຫລັກ). ການນຳໃຊ້ເງິນຕາຕ່າງປະເທດເປັນເງິນສົດແມ່ນໃຫ້ເໝາະສົມກັບເປົ້າໝາຍ ແລະ ວັດຖຸປະສົງເປັນຫລັກ ໂດຍກ່ອນການນຳໃຊ້ເງິນຕາຕ່າງປະເທດທຸກຄັ້ງພາຍໃນ ສປປ ລາວ ຕ້ອງມີການແລກປ່ຽນເປັນເງິນກີບກັບທະນາຄານທຸລະກິດເທົ່ານັ້ນ ເມື່ອຕ້ອງການຊຳລະພາຍໃນປະເທດ.

ສຳລັບການກຳນົດການຖືຄອງເງິນຕາຕ່າງປະເທດໃນຮູບແບບເງິນສົດເກີນຈຳນວນທີ່ ທຫລ ກຳນົດອອກແຕ່ລະໄລຍະ ແລະ ບໍ່ສາມາດຢັ້ງຢືນແຫຼ່ງທີ່ມາຊັດເຈນນັ້ນຖືວ່າເງິນຈຳນວນດັ່ງກ່າວ ແມ່ນບໍ່ຖືກຕ້ອງຕາມກົດໝາຍ, ບັນຫານີ້ ທຫລ ເຫັນວ່າໃນໄລຍະນີ້ແມ່ນຈະແນະນຳໃຫ້ປະຊາຊົນຖືຄອງເງິນຕາຕ່າງປະເທດໃນຮູບແບບເງິນສົດຕາມຈຳນວນທີ່ເໝາະສົມ, ຈຳເປັນໃນການດຳລົງຊີວິດ ແລະ ຮັບປະກັນຄວາມປອດໄພ. ຊຶ່ງສະພາບເສດຖະກິດການເງິນ-ເງິນຕາປະຈຸບັນ (ເງິນກີບບໍ່ທັນຄົງທີ່ ແລະ ອັດຕາເງິນເຟີ້ກໍມີການເໜັງຕີງ) ເນື່ອງຈາກໃນເສດຖະກິດຍັງມີການຊຳລະໃນຮູບແບບເງິນສົດ ແລະ ຄວາມຊິນເຄີຍຂອງສັງຄົມໃນການຖືຄອງເປັນເງິນສົດ ເພື່ອການຊຳລະສະສາງກັບຕ່າງປະເທດ ແມ່ນມີຫຼາຍພໍສົມຄວນ.

ກ່ອນປິດການຖະແຫຼງຂ່າວຂອງວັນດຽວກັນນີ້ **ທ່ານ ວັດທະນາ ຊານຸບານ ຕ່າງໜ້າກົມຄຸ້ມຄອງເງິນຕາຕ່າງປະເທດ, ທະນາຄານແຫ່ງ ສປປ ລາວ** ໄດ້ຖືໂອກາດນີ້ຮຽກຮ້ອງໃຫ້ບັນດາພໍ່ແມ່ປະຊາຊົນ, ພໍ່ຄ້າຊາວຂາຍ, ພະນັກງານ, ທະຫານ, ຕຳຫຼວດ ຕະຫຼອດຮອດຜູ້ທີ່ມີພູມລຳເນົາຢູ່ ສປປ ລາວ ໃນຂອບເຂດທົ່ວປະເທດ ທີ່ເປັນລູກຄ້າຂອງທະນາຄານທຸລະກິດໃຫ້ມີຄວາມເຊື່ອໝັ້ນຕໍ່ການເຄື່ອນໄຫວຂອງລະບົບທະນາຄານ, ບໍ່ຫຼົງເຊື່ອຕໍ່ກະແສຂ່າວຕ່າງໆ ທີ່ບໍ່ເປັນທາງການ ຫຼື ສາມາດອ່ານເພີ່ມເຕີມໃນ**ບົດແນະນຳ ຄຳສັ່ງວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ສະບັບເລກທີ 363/ກຄງຕ ລົງວັນທີ 4 ກັນຍາ 2023 ທີ່ໄດ້ລົງເຜີຍແຜ່ໃນເວັບໄຊ ຂອງທະນາຄານແຫ່ງ ສປປ ລາວ (WWW.bol.gov.la)** ແລະ ຖ້າຫາກມີຂໍ້ສົງໄສປະການໃດຂໍໃຫ້ປະສານຫາ ທຫລ ແລະ ພາກສ່ວນກ່ຽວຂ້ອງ ເພື່ອຄວາມເຂົ້າໃຈທີ່ຖືກຕ້ອງ, ປະກອບສ່ວນເຂົ້າໃນການປັບປຸງແກ້ໄຂວຽກງານຄຸ້ມຄອງມະຫາພາກຂອງລັດ ກໍຄືການເຄື່ອນໄຫວທຸລະກິດ ເພື່ອຜົນປະໂຫຍດລວມຂອງປະຊາຊົນລາວບັນດາເຜົ່າໃຫ້ມີຊີວິດການເປັນຢູ່ກັບເຂົ້າສູ່ສະພາບປົກກະຕິ ແລະ ເຂັ້ມແຂງຂຶ້ນເທື່ອລະກ້າວ.

**ຂ່າວ: ກົມຄຸ້ມຄອງເງິນຕາຕ່າງປະເທດ**
**ພາບ: ສົມພິດ ທຳມະວົງ+ສອນໄຊ ສີຫາເທບ**

*ຢູ່ເມືອງລາວໃຊ້ເງິນກີບລາວ*